# ປະກາດຮັບສະໝັກຂັບລົດ ສັນຍາຈ້າງ

ທະນາຄານການຄ້າຕ່າງປະເທດລາວມະຫາຊົນ **ສຳນັກງານໃຫຍ່** ມີຄວາມຕ້ອງການຮັບພະນັກງານຂັບລົດ (ສັນຍາຈ້າງ) **ຈຳນວນ 02 ຄົນ.**

❖ **ເງື່ອນໄຂຜູ້ສະໝັກ:**

- ✓ ເພດຊາຍ ອາຍຸແຕ່ 25- 35 ປີ.
- ✓ ຈົບມັດທະຍົມຕົ້ນຂື້ນໄປ
- ✓ ມີໃບຂັບຂີ່ ແລະ ຍັງນຳໃຊ້ໄດ້ຢູ່ຈົນເຖິງປະຈຸບັນ.
- ✓ ບໍ່ເຄີຍຕ້ອງໂທດ ຄະດີອາຍາ ຫຼື ອາດສະຍາກຳອື່ນໆ, ຕິດຄຸກ ຫຼື ກ່ຽວຂ້ອງກັບສິ່ງຜິດ ລະບຽບກົດໝາຍ.
- ✓ ມີທີ່ພັກອາໄສຢູ່ນະຄອນຫຼວງວຽງຈັນ.
- ✓ ສາມາດເຮັດວຽກນອກໂມງການ ແລະ ໄປຕ່າງແຂວງໄດ້.

❖ **ຄຸນລັກສະນະຜູ້ສະໝັກ:**

- ✓ ມີສຸຂະພາບແຂງແຮງ ແລະ ສາມາດຍົກເຄື່ອງໜັກໄດ້.
- ✓ ມີຄວາມຫ້າວຫັນ ແລະ ຊື່ສັດຕໍ່ໜ້າທີ່ວຽກງານ.
- ✓ ມີຄວາມຮູ້ການນຳໃຊ້ອຸປະກອນບຳລຸງຮັກສາລົດ ແລະ ສ້ອມແປງລົດໄດ້.
- ✓ ມີມະນຸດສຳພັນດີ ແລະ ມີໃຈຮັກໃນການບໍລິການ.
- ✓ ລະອຽດຮອບຄອບ, ມີຄວາມຮັບຜິດຊອບສູງ ແລະ ກົງຕໍ່ເວລາ.
- ✓ ເຄົາລົບນັບຖືກົດລະບຽບກົດໝາຍ ແລະ ລະບຽບຈະລາຈອນຢ່າງເຄັ່ງຄັດ.

❖ **ຜົນຕອບແທນ ແລະ ນະໂຍບາຍຕ່າງໆ:**

- ✓ ໄດ້ຮັບເງິນເດືອນຕາມລະບຽບກົດໝາຍແຮງງານຂັ້ນຕົ້ນ.
- ✓ ເງິນແຮງງານ ແລະ ເງິນນະໂຍບາຍອື່ນໆ ຕາມລະບຽບຂອງ ທຄຕລ.
- ✓ ເປັນພະນັກງານສັນຍາຈ້າງ ປີ ຕໍ່ ປີ.

❖ **ຂົງເຂດ ແລະ ໜ້າທີ່ຮັບຜິດຊອບ:**

- ✓ ປະຕິບັດໜ້າທີ່ຂັບລົດຮັບໃຊ້ວຽກງານພາຍໃນສຳນັກງານໃຫຍ່ ແລະ ບັນດາໜ່ວຍ ບໍລິການ.
- ✓ ບຳລຸງຮັກສາລົດທີ່ຢູ່ໃນຄວາມຮັບຜິດຊອບ ແລະ ບັນດາອຸປະກອນເຄື່ອງໃຊ້ພາຍໃນ ລົດໃຫ້ມີຄວາມສະອາດຈົບງາມ.
- ✓ ກວດສອບສະພາບ ແລະ ຮັກສາລົດໃຫ້ພ້ອມໃຊ້ງານເປັນປະຈຳ.
- ✓ ວຽກງານອື່ນໆ ທີ່ໄດ້ຮັບມອບໝາຍ.

❖ **ວິທີສະໝັກວຽກ:**

1. **ເປີດຂາຍ-ຮັບຟອມສະໝັກ ໃນລະຫວ່າງວັນທີ 12-23/03/2018.**
2. ກະລຸນາພິວພັນເອົາຟອມສະໝັກງານດ້ວຍຕົນເອງໄດ້ທີ່ພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່ (ແຄມຂອງ) ຕຶກ C ຊັ້ນ 04 ຫຼື ໂທສອບຖາມຂໍ້ມູນກ່ອນ ໄດ້ທີ່ **021 213200 ຕໍ່ 417** (ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງ ຜູ້ສະໝັກງານມາພິວພັນຮັບ-ສົ່ງເອກະສານແທນ).
3. ໃຫ້ນຳເອົາໃບຂັບຂີ່ ແລະ ບັດປະຈຳຕົວ ຫຼື ສຳມະໂນຄົວສະບັບຕົ້ນ ມານຳໃນເວລາ ທີ່ມາພິວພັນເອົາແບບຟອມ-ສົ່ງແບບຟອມສະໝັກວຽກ.

**ຜູ້ທີ່ຜ່ານການຄັດຟອມໃນເບື້ອງຕົ້ນ ທາງ ທຄຕລ ຈະຕິດຕໍ່ກັບ.**

**ນະຄອນຫຼວງວຽງຈັນ, ວັນທີ 12/03/2018**

**ຫົວໜ້າພະແນກຈັດຕັ້ງ-ພະນັກງານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພະແນກ ຈັດຕັ້ງແລະພະນັກງານ

ນ.ບົວໄພວັນ ມັນດາວົງ